# ບົດເຝິກຫັດ

# ໜ່ວຍການຄົມມະນາຄົມ ແລະ ການສື່ສານ

## ຊັ້ນອະນຸບານສຶກສາປີທີ 2



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2014


ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການຮ່ວມມືສາກົນ UNICEF ປະຈໍາລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈໍານວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2014


ສະຫງວນລິຂະສິດ

# ປຶ້ມເຝິກຫັດ

# ໜ່ວຍການຄົມມະນາຄົມ ແລະ ການສື່ສານ

## ຊັ້ນອະນຸບານສຶກສາ ປີທີ 2


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ບານໃຈ ມາລາວົງ
ພູມະລີ ແສງຈັນນະວົງ

ກວດແກ້ໂດຍ: ດຣ ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ສົມບູນ ມາສຸວັນ

ພິມເຂົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ
ທອງດຳ ທອງສິນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2014

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດ ຫຼາຍຂຶ້ນ.

ປື້ມບົດເຝິກຫັດໜ່ວຍການຄົມມະນາຄົມ ແລະ ການສື່ສານເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 4 ປີ.

ປື້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງການຄົມມະນາຄົມ ແລະ ການສື່ສານມີດັ່ງນີ້:

1. ການເດີນທາງ.
2. ການເດີນທາງ ໃນທາງນ້ຳ, ທາງບົກ ແລະ ທາງອາກາດ.
3. ການສື່ສານ.
4. ການສື່ສານດ້ວຍການອ່ານ, ການແຕ້ມ, ການຂຽນ.

ການນຳໃຊ້ປື້ມບົດເຝິກຫັດໜ່ວຍການຄົມມະນາຄົມ ແລະ ການສື່ສານ ເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກນ້ອຍໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປື້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປື້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປື້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

ໜ້າ


ກິດຈະກຳການຮຽນ-ການສອນໜ່ວຍການຄົມມະນາຄົມ ແລະ ການສື່ສານ ................................ 1
ການເດີນທາງ........................................................................................................ 2
ປະເພດຂອງການເດີນທາງ........................................................................................ 3
ການຍ່າງເບື້ອງຂວາມື.............................................................................................. 4
ພາຫະນະການເດີນທາງໃນທາງບົກ.............................................................................. 5
ສ່ວນຕ່າງໆຂອງລົດຖີບ............................................................................................ 6
ປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ລົດຖີບ....................................................... 7
ສ່ວນຕ່າງໆຂອງລົດຈັກ............................................................................................ 8
ປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ລົດຈັກ....................................................... 9
ສ່ວນຕ່າງໆຂອງລົດໃຫຍ່.......................................................................................... 10
ປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ລົດໃຫຍ່..................................................... 11
ການເດີນທາງໃນທາງນໍ້າ ແລະ ທາງອາກາດ.................................................................. 12
ພາຫະນະການເດີນທາງ ໃນທາງນໍ້າ .......................................................................... 13
ສ່ວນຕ່າງໆ ຂອງເຮືອຈັກ ແລະ ເຮືອພາຍ..................................................................... 14
ປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ເຮືອ.......................................................... 15
ພາຫະນະການເດີນທາງ ໃນທາງອາກາດ ..................................................................... 16
ສ່ວນຕ່າງໆຂອງເຮືອບິນ.......................................................................................... 17
ປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ເຮືອບິນ.................................................... 18
ການສື່ສານ........................................................................................................... 19
ປະເພດການສື່ສານ................................................................................................. 20
ເຄື່ອງມືການສື່ສານ................................................................................................ 21
ປະໂຫຍດຂອງການສື່ສານ......................................................................................... 22
ການສົນທະນາ....................................................................................................... 23
ການປະຕິບັດຕົນໃນການສົນທະນາ............................................................................. 24
ການຟັງ............................................................................................................... 25
ການປະຕິບັດຕົນໃນການຟັງ..................................................................................... 26
ການເບິ່ງ.............................................................................................................. 27
ການປະຕິບັດຕົນໃນການເບິ່ງ.................................................................................... 28

ການສື່ສານດ້ວຍການອ່ານ, ການແຕ້ມ ແລະ ການຂຽນ.......... 29
ການອ່ານ.......... 30
ການປະຕິບັດຕົນໃນການອ່ານ.......... 31
ການແຕ້ມ.......... 32
ການປະຕິບັດຕົນໃນການແຕ້ມ.......... 33
ການຂຽນພະຍັນຊະນະ.......... 34
ການຂຽນຕົວເລກ.......... 35
ການປະຕິບັດຕົນໃນການຂຽນ.......... 36

# ກິດຈະກຳການຮຽນ-ການສອນ

# ໜ່ວຍການຄົມມະນາຄົມ ແລະ ການສື່ສານ



**ຫົວຂໍ້ເນື້ອໃນການຮຽນຂອງແຕ່ລະອາທິດ ໜ່ວຍການຄົມມະນາຄົມ ແລະ ການສື່ສານ ປະກອບມີ:**

1. ການເດີນທາງ.
2. ການເດີນທາງ ໃນທາງນໍ້າ, ທາງບົກ ແລະ ທາງອາກາດ.
3. ການສື່ສານ, ເຄື່ອງມືໃນການສື່ສານ ແລະ ການປະຕິບັດຕົນ.
4. ການສື່ສານດ້ວຍການອ່ານ, ການແຕ້ມ, ການຂຽນ ແລະ ການປະຕິບັດຕົນ.

# ການເດີນທາງ



**ຫົວຂໍ້ເນື້ອໃນການຮຽນອາທິດທີ 1 ການເດີນທາງ:**

1. ປະເພດຂອງການເດີນທາງ ແລະ ການຍ່າງທາງເບື້ອງຂວາມື.
2. ພາຫະນະການເດີນທາງ ໃນທາງບົກ.
3. ລົດຖີບ ແລະ ການປະຕິບັດຕົນໃນເວລາຂີ່ລົດຖີບ.
4. ລົດຈັກ ແລະ ການປະຕິບັດຕົນໃນເວລາຂີ່ລົດຈັກ.
5. ລົດໃຫຍ່ ແລະ ການປະຕິບັດຕົນໃນເວລາຂີ່ລົດໃຫຍ່.

# ປະເພດຂອງການເດີນທາງ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດຂອງການເດີນທາງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ປະເພດຂອງການເດີນທາງມີທາງບົກ, ທາງອາກາດ ແລະ ທາງນ້ຳ.
- ໃຫ້ເດັກນ້ອຍທາສີຮູບລົດ, ເຮືອບິນ ແລະ ເຮືອ ໂດຍນຳໃຊ້ສີຕາມໃຈ.

# ການຍ່າງເບື້ອງຂວາມື




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການຍ່າງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ການຍ່າງຂຶ້ນ, ລົງຂັ້ນໄດ ຄວນປະຕິບັດແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການຍ່າງຕາມທາງໄປ ມາ ແລະ ຍ່າງຂຶ້ນລົງຂັ້ນໄດ ຕ້ອງຍ່າງກ້ຳຂວາ ເພື່ອຄວາມປອດໄພ ບໍ່ໃຫ້ຕຳກັນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍຂຶ້ນຂັ້ນໄດດ້ວຍສີຟ້າ ແລະ ລົງຂັ້ນໄດດ້ວຍສີແດງ.

# ພາຫະນະການເດີນທາງໃນທາງບົກ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ພາຫະນະການເດີນທາງ ໃນທາງບົກ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍຂີ່ລົດບໍ?
- ໃຫ້ເດັກນ້ອຍສະຫຼຸບ: ພາຫະນະການເດີນທາງ ໃນທາງບົກມີລົດຕຸກໆ, ລົດກະບະ, ລົດເມ, ລົດຈັກ ແລະ ລົດຖີບ.
- ໃຫ້ເດັກນ້ອຍທາສີຮູບລົດ ໂດຍນຳໃຊ້ສີຕາມໃຈ.

# ສ່ວນຕ່າງໆຂອງລົດຖີບ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສ່ວນຕ່າງໆຂອງລົດຖີບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຄີຍຂີ່ລົດຖີບບໍ? ສ່ວນຕ່າງໆຂອງລົດຖີບມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ສ່ວນຕ່າງໆຂອງລົດຖີບມີເຂົາລົດ, ກະດິ່ງ, ຂາໄຂ, ຕີນລົດ, ດີ້ວລົດ, ໂສ້, ໂກບ, ອານນັ່ງ ແລະ ຜາງຕີນລົດ.
- ໃຫ້ເດັກນ້ອຍທາສີຮູບລົດຖີບ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ລົດຖີບ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ລົດຖີບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍຂີ່ລົດຖີບບໍ?
- ໃຫ້ເດັກນ້ອຍສະຫຼຸບ: ປະໂຫຍດແມ່ນໄປ, ມາສະດວກ ແລະ ວ່ອງໄວ; ການປະຕິບັດຕົນໃນເວລາຂີ່ລົດຖີບຕ້ອງລະວັງບໍ່ໃຫ້ຕີນເຂົ້າຄີ່ວລົດ ແລະ ກອດແອວ ຫຼື ຈັບແອວໃຫ້ແໜ້ນ.
- ໃຫ້ເດັກນ້ອຍທາສີຮູບຄົນ ແລະ ລົດ ໂດຍນຳໃຊ້ສີຕາມໃຈ.

# ສ່ວນຕ່າງໆຂອງລົດຈັກ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສ່ວນຕ່າງໆຂອງລົດຈັກ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຄີຍຂີ່ລົດຈັກບໍ? ສ່ວນຕ່າງໆຂອງລົດຈັກມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ສ່ວນຕ່າງໆຂອງລົດຈັກມີເຂົ້າລົດ, ແກ, ຂາໄຊ, ຕີນລົດ, ດີ້ວລົດ, ໂສ້, ໂກບ, ອານນັ່ງ, ເຄື່ອງຈັກ.
- ໃຫ້ເດັກນ້ອຍທາສີຮູບລົດຈັກ ໂດຍນໍາໃຊ້ສີຕາມໃຈ.

# ປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ລົດຈັກ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ລົດຈັກ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍຂີ່ລົດຈັກບໍ?
- ໃຫ້ເດັກນ້ອຍສະຫຼຸບ: ປະໂຫຍດແມ່ນໄປ, ມາສະດວກ ແລະ ວ່ອງໄວ; ການປະຕິບັດຕົນໃນເວລາຂີ່ລົດຈັກໃສ່ໝວກກັນກະທົບ, ບໍ່ໃຫ້ຕີນຖືກທໍ່ລົດ ແລະ ກອດແອວ ຫຼື ຈັບແອວໃຫ້ແໜ້ນ.
- ໃຫ້ເດັກນ້ອຍທາສີຮູບຄົນ ແລະ ລົດຈັກ ໂດຍນຳໃຊ້ສີຕາມໃຈ.

# ສ່ວນຕ່າງໆຂອງລົດໃຫຍ່



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສ່ວນຕ່າງໆຂອງລົດໃຫຍ່.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍຂີ່ລົດໃຫຍ່ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ສ່ວນຕ່າງໆຂອງລົດໃຫຍ່ມີພວງມະໄລ, ຕີນລົດ, ແກ, ຕາໄຟລົດ, ບ່ອນນັ່ງ.
- ໃຫ້ເດັກນ້ອຍທາສີຮູບລົດ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ລົດໃຫຍ່



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ລົດໃຫຍ່.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍຂີ່ລົດໃຫຍ່ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ປະໂຫຍດໄປ, ມາສະດວກ, ວ່ອງໄວ ແລະ ບັນທຸກ ຫຼື ຕ່າງຂອງໄດ້ຫຼາຍ; ການປະຕິບັດຕົນໃນເວລາຂີ່ລົດໃຫຍ່ຕ້ອງນັ່ງຢູ່ກັບບ່ອນ, ໃສ່ສາຍຮັດນິລະໄພ, ບໍ່ເດ່ແຂນອອກນອກລົດ, ເວລາຂຶ້ນ ແລະ ລົງຕ້ອງໃຫ້ຈອດລົດກ່ອນ.
- ໃຫ້ເດັກນ້ອຍທາສີຮູບລົດ ໂດຍນຳໃຊ້ສີຕາມໃຈ.

# ການເດີນທາງໃນທາງນ້ຳ ແລະ ທາງອາກາດ





**ຫົວຂໍ້ເນື້ອໃນການຮຽນອາທິດທີ 2 ເດີນທາງໃນທາງນ້ຳ ແລະ ທາງອາກາດ:**

1. ພາຫະນະການເດີນທາງ ໃນທາງນ້ຳ.
2. ສ່ວນຕ່າງໆ ຂອງເຮືອຈັກ, ເຮືອພາຍ.
3. ການປະຕິບັດຕົນໃນເວລາຂີ່ເຮືອ.
4. ພາຫະນະການເດີນທາງ ໃນທາງອາກາດ.
5. ສ່ວນຕ່າງໆຂອງເຮືອບິນ.
6. ການປະຕິບັດຕົນໃນເວລາຂີ່ເຮືອບິນ.

# ພາຫະນະການເດີນທາງໃນທາງນ້ຳ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກພາຫະນະການເດີນທາງ ໃນທາງນ້ຳ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ພາຫະນະການເດີນທາງ ໃນທາງນ້ຳມີເຮືອພາຍ ແລະ ເຮືອຈັກ.
- ໃຫ້ເດັກນ້ອຍທາສີຮູບເຮືອ ໂດຍນຳໃຊ້ສີຕາມໃຈ.

# ສ່ວນຕ່າງໆຂອງເຮືອຈັກ ແລະ ເຮືອພາຍ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສ່ວນຕ່າງໆຂອງເຮືອຈັກ ແລະ ເຮືອພາຍ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ສ່ວນຕ່າງໆຂອງເຮືອຈັກປະກອບມີຫົວເຮືອ, ບ່ອນນັ່ງ, ທ້າຍເຮືອ ແລະ ຈັກເຮືອ ແລະ ເຮືອພາຍປະກອບມີຫົວເຮືອ, ບ່ອນນັ່ງ, ທ້າຍເຮືອ, ໄມ້ພາຍ.
- ໃຫ້ເດັກນ້ອຍທາສີຮູບເຮືອ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ເຮືອ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ເຮືອ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍຂີ່ເຮືອບໍ?
- ໃຫ້ເດັກນ້ອຍສະຫຼຸບ: ປະໂຫຍດໄປ, ມາສະດວກ ແລະ ວ່ອງໄວ; ການປະຕິບັດຕົນໃນເວລາຂີ່ເຮືອນັ່ງຢູ່ກັບບ່ອນ, ບໍ່ເດ່ມືໄປຫຼິ້ນນ້ຳ, ບໍ່ຢອກກັນ, ໃສ່ເສື້ອຊູຊີບ ແລະ ບໍ່ຖິ້ມຂີ້ເຫຍື້ອລົງນ້ຳ.
- ໃຫ້ເດັກນ້ອຍທາສີຮູບຄົນ ແລະ ເຮືອ ໂດຍນຳໃຊ້ສີຕາມໃຈ.

# ພາຫະນະການເດີນທາງໃນທາງອາກາດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກພາຫະນະການເດີນທາງໃນທາງອາກາດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍເຫັນເຮືອບິນບໍ?
- ໃຫ້ເດັກນ້ອຍສະຫຼຸບ: ພາຫະນະການເດີນທາງ ໃນທາງອາກາດມີເຮືອບິນ.
- ໃຫ້ເດັກນ້ອຍທາສີຮູບເຮືອບິນ ໂດຍນຳໃຊ້ສີຕາມໃຈ.

# ສ່ວນຕ່າງໆຂອງເຮືອບິນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສ່ວນຕ່າງໆຂອງເຮືອບິນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ສ່ວນຕ່າງໆຂອງເຮືອບິນປະກອບມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ສ່ວນຕ່າງໆຂອງເຮືອບິນມີສ່ວນຫົວ, ມີປະຕູທາງເຂົ້າ ແລະ ອອກຂອງຜູ້ໂດຍສານ; ສ່ວນທາງກາງມີປີກ, ໃບປັ່ນ ຫຼື ໃບພັດ, ມີບ່ອນນັ່ງຂອງຜູ້ໂດຍສານ ແລະ ສ່ວນທ້າຍເຮືອບິນມີຫາງເຮືອບິນ.
- ໃຫ້ເດັກນ້ອຍທາສີຮູບເຮືອບິນ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ເຮືອບິນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະໂຫຍດ ແລະ ການປະຕິບັດຕົນໃນເວລາຂີ່ເຮືອບິນ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ເຮືອບິນໃຊ້ໄວ້ເຮັດຫຍັງ? ເຮົາຄວນເຮັດແນວໃດເວລາຂີ່ເຮືອບິນ?
- ໃຫ້ເດັກນ້ອຍສະຫຼຸບ: ປະໂຫຍດຂອງເຮືອບິນເດີນທາງໄປ, ມາສະດວກ ແລະ ວ່ອງໄວ; ການປະຕິບັດຕົນແມ່ນນັ່ງຢູ່ກັບບ່ອນ, ໃສ່ສາຍຮັດນິລະໄພ, ຖິ້ມຂີ້ເຫຍື້ອຖືກບ່ອນ ແລະ ປະຕິບັດຕາມ ຄໍາແນະນໍາຂອງການບິນ.
- ໃຫ້ເດັກນ້ອຍທາສີຮູບເຮືອບິນ ໂດຍນໍາໃຊ້ສີຕາມໃຈ.

# ການສື່ສານ









**ຫົວຂໍ້ເນື້ອໃນການຮຽນອາທິດທີ 3 ສື່ສານ, ເຄື່ອງມືໃນການສື່ສານ ແລະ ການປະຕິບັດຕົນ:**

1. ປະເພດການສື່ສານ ແລະ ເຄື່ອງມືສື່ສານ.
2. ປະໂຫຍດຂອງການສື່ສານ.
3. ການສົນທະນາ ແລະ ການປະຕິບັດຕົນໃນການສົນທະນາ.
4. ການຟັງ ແລະ ການປະຕິບັດຕົນໃນການຟັງ.
5. ການເບິ່ງ ແລະ ການປະຕິບັດຕົນໃນການເບິ່ງ.

# ປະເພດການສື່ສານ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດການສື່ສານ, ການສົນທະນາ, ການຟັງ ແລະ ການເບິ່ງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍເບິ່ງຮູບພາບ ແລະ ຟັງວິທະຍຸບໍ?
- ໃຫ້ເດັກນ້ອຍສະຫຼຸບ: ການສື່ສານປະກອບມີການສື່ສານດ້ວຍການສົນທະນາ, ການຟັງ ແລະ ການເບິ່ງ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງມືການສື່ສານ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງມືການສື່ສານ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຮືອນຫຼານມີໂທລະພາບບໍ? ຫຼານເຄີຍລົມໂທລະສັບບໍ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງມືການສື່ສານປະກອບມີຈົດໝາຍ, ວິທະຍຸ, ໂທລະສັບ, ໂທລະພາບ, ໂທລະໂຄ່ງ, ປຶ້ມນິທານ, ປຶ້ມຮູບພາບ, ໜັງສືພິມ ແລະ ໂປສະເຕີ.
- ໃຫ້ເດັກນ້ອຍທາສີຮູບວິທະຍຸ, ໂທລະພາບ, ໂທລະສັບ, ປຶ້ມຮູບພາບ ແລະ ໂທລະໂຄ່ງ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດຂອງການສື່ສານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະໂຫຍດຂອງການສື່ສານ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຢູ່ເຮືອນຫຼານຟັງຄວາມພໍ່ແມ່ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ປະໂຫຍດຂອງການສື່ສານໄດ້ຮັບຂໍ້ມູນຂ່າວສານ, ເຂົ້າໃຈໃນການສົນທະນາ; ໄດ້ຟັງ, ໄດ້ເບິ່ງຂ່າວ ແລະ ເບິ່ງການສະແດງຕ່າງໆ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ການສົນທະນາ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການສົນທະນາ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍສົນທະນາກັບໝູ່ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ການສົນທະນາແມ່ນການໂອ້ລົມ, ຖາມ, ຕອບລະຫວ່າງຄົນກັບຄົນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການສົນທະນາ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການສົນທະນາ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຄວນປະຕິບັດຕົນໃນການສົນທະນາແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນການສົນທະນາເວົ້າກັບໝູ່ເພື່ອນ, ເວົ້າກັບຜູ້ໃຫຍ່ ດ້ວຍຄຳເວົ້າສຸພາບ ແລະ ເວົ້າເທື່ອລະຄົນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ແລະ ຜູ້ໃຫຍ່ ໂດຍນຳໃຊ້ສີຕາມໃຈ.

# ການຟັງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຟັງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານມັກຟັງວິທະຍຸບໍ?
- ສະຫຼຸບ: ການຟັງປະກອບມີຟັງສຽງຈາກວິທະຍຸ, ໂທລະສັບ ແລະ ໂທລະໂຄ່ງ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການຟັງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການຟັງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຄວນປະຕິບັດຕົນໃນການຟັງແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນ ການຟັງຕ້ອງຕັ້ງໃຈຟັງຜູ້ອື່ນເວົ້າ, ບໍ່ຢອກກັນ ແລະ ບໍ່ລົບກວນຜູ້ອື່ນ ໃນເວລາຟັງ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ການເບິ່ງ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເບິ່ງ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍເບິ່ງໂທລະພາບ ແລະ ຮູບພາບບໍ?
- ໃຫ້ເດັກນ້ອຍສະຫຼຸບ: ການເບິ່ງປະກອບມີເບິ່ງຮູບພາບ, ເບິ່ງປຶ້ມນິທານ, ໂປສະເຕີ ແລະ ໂທລະພາບ.
- ໃຫ້ເດັກທາສີຮູບເດັກນ້ອຍ, ປຶ້ມ ແລະ ໂທລະພາບ ໂດຍນໍາໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການເບິ່ງ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການເບິ່ງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ການເບິ່ງປຶ້ມ ແລະ ໂທລະພາບ ຄວນເຮັດແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນການເບິ່ງ ນັ່ງເບິ່ງເປັນລະບຽບ, ບໍ່ນັ່ງບັງກັນ ແລະ ຕັ້ງໃຈເບິ່ງ; ຫຼັງຈາກເບິ່ງໂທລະພາບແລ້ວປິດໄວ້, ເກັບມ້ຽນຮູບພາບ ແລະ ມ້ຽນປຶ້ມນິທານໄວ້ຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍອ່ານປຶ້ມ ໂດຍນຳໃຊ້ສີຕາມໃຈ.

# ການສື່ສານດ້ວຍການອ່ານ, ການແຕ້ມ ແລະ ການຂຽນ







**ຫົວຂໍ້ເນື້ອໃນການຮຽນອາທິດທີ 4 ການອ່ານ, ການແຕ້ມ, ການຂຽນ ແລະ ການປະຕິບັດຕົນ:**

1. ການອ່ານ.
2. ການປະຕິບັດຕົນໃນການອ່ານ.
3. ການແຕ້ມ.
4. ການປະຕິບັດຕົນໃນການແຕ້ມ.
5. ການຂຽນ ແລະ ການປະຕິບັດຕົນໃນການຂຽນ.

# ການອ່ານ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການອ່ານ ແລະ ປະໂຫຍດຂອງການອ່ານ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ອ້າຍ ແລະ ເອື້ອຍເຄີຍອ່ານນິທານໃຫ້ຫຼານຟັງບໍ?
- ໃຫ້ເດັກນ້ອຍສະຫຼຸບ: ການອ່ານປະກອບມີ ອ່ານປຶ້ມນິທານ, ໜັງສືພິມ, ວາລະສານ, ຮູບພາບ ແລະ ຈົດໝາຍ; ປະໂຫຍດການອ່ານ ເຝິກໃຫ້ມີສະມາທິ, ມີນິດໄສຮັກການອ່ານ, ມີຄວາມເຂົ້າໃຈໃນເລື່ອງທີ່ອ່ານ.
- ໃຫ້ເດັກນ້ອຍທາສີຮູບປຶ້ມ, ຈົດໝາຍ ແລະ ໜັງສືພິມໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການອ່ານ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການອ່ານ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເວລາຫຼານອ່ານປຶ້ມຄວນປະຕິບັດຕົນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນການອ່ານ ເວລາຢູ່ໃນຫ້ອງອ່ານໃຫ້ອ່ານສຽງຄ່ອຍໆ, ແບ່ງປັນປຶ້ມ, ເປີດປຶ້ມໃຫ້ຖືກວິທີ ແລະ ບໍ່ລົບກວນຄົນອື່ນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ແລະ ຫ້ອງອ່ານ ໂດຍນຳໃຊ້ສີຕາມໃຈ.

# ການແຕ້ມ






**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການແຕ້ມ ແລະ ປະໂຫຍດການແຕ້ມ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍແຕ້ມຮູບບໍ?
- ໃຫ້ເດັກນ້ອຍສະຫຼຸບ: ປະໂຫຍດຂອງ ການແຕ້ມ ເຝິກກ້າມຊີ້ນມື, ເຝິກປະສາດສຳພັນລະຫວ່າງຕາ ແລະ ມື; ສະແດງຄວາມຮູ້ສຶກຂອງ ຕົນໃນການແຕ້ມ, ໄດ້ຮັບຂໍ້ມູນຂ່າວສານຈາກການແຕ້ມ.
- ໃຫ້ເດັກນ້ອຍທາສີຮູບດອກໄມ້ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການແຕ້ມ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການແຕ້ມ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເວລາແຕ້ມຮູບຄວນປະຕິບັດຕົນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນການແຕ້ມຕ້ອງແຕ້ມຄ່ອຍໆບໍ່ໃຫ້ເຈ້ຍຂາດ, ບໍ່ຍ່ອງເຈ້ຍ, ແບ່ງປັນສໍໃຫ້ໝູ່ ແລະ ຮັກສາຮູບແຕ້ມໃຫ້ສະອາດ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການຂຽນພະຍັນຊະນະ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຂຽນ ແລະ ປະໂຫຍດຂອງການຂຽນພະຍັນຊະນະ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍຂຽນຕົວພະຍັນຊະນະບໍ?
- ໃຫ້ເດັກນ້ອຍສະຫຼຸບ: ການຂຽນປະກອບມີເຝິກຂຽນຕາມຮອຍຈ້ຳພະຍັນຊະນະ; ປະໂຫຍດຂອງການຂຽນເຝິກກ້າມຊີ້ນມື, ເຝິກປະສາດສຳພັນລະຫວ່າງຕາ ແລະ ມື; ສະແດງຄວາມຮູ້ສຶກຂອງຕົນໃນການຂຽນ ແລະ ໄດ້ຮັບຂໍ້ມູນຂ່າວສານຈາກການຂຽນ.
- ໃຫ້ເດັກນ້ອຍທາສີຮູບພະຍັນຊະນະ ໂດຍນຳໃຊ້ສີຕາມໃຈ.

# ການຂຽນຕົວເລກ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຂຽນຕົວເລກ ແລະ ປະໂຫຍດຂອງການຂຽນຕົວເລກ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍຂຽນຕົວເລກບໍ?
- ໃຫ້ເດັກນ້ອຍສະຫຼຸບ: ການຂຽນປະກອບມີເຝິກຂຽນຕາມຮອຍຈ້ຳຕົວເລກ.
- ໃຫ້ເດັກນ້ອຍທາສີຮູບຕົວເລກ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການຂຽນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການຂຽນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຄວນປະຕິບັດຕົນໃນການຂຽນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນການຂຽນຕາມຮອຍຈ້ຳຄ່ອຍໆບໍ່ໃຫ້ເຈ້ຍຂາດ, ບໍ່ຍ່ອງເຈ້ຍ, ແບ່ງປັນສໍ ໃຫ້ໝູ່ ແລະ ຮັກສາເຈ້ຍຂຽນໃຫ້ສະອາດ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.